# ປະຫວັດຫຍໍ້ຂອງສາຍພົວພັນລະຫວ່າງສະຫະລັດ – ຮາວາຍ

**1826 –** ສະຫະລັດໄດ້ຮັບຮູ້ຮາຊອານາຈັກຮາວາຍວ່າ ເປັນຜືນແຜ່ນດິນທີ່ມີອະທິປະໄຕ ແລະມີເອກະລາດປະເທດນຶ່ງ.

**1893 –** ກອງທັບເຮືອສະຫະລັດໄດ້ໄປຄອບຄອງຮາວາຍ ໂດຍໃຫ້ເຫດຜົນວ່າ ເພື່ອເປັນການຮັກ ສາຜົນປະໂຫຍດທາງດ້ານຄວາມໝັ້ນຄົງຂອງສະຫະລັດ, ແລະເອກອັກຄະຣາຊທູດສະຫະລັດກໍໄດ້ປັກທຸງອາເມຣິກາຂຶ້ນໃນຮາວາຍ ແລ້ວກໍປະກາດວ່າ ຮາວາຍເປັນອານາຈັກທີ່ຢູ່ໃນການອາລັກ ຂາຂອງສະຫະລັດ. ຈາກນັ້ນ ລັດຖະບານສະຫະລັດກໍ "ໄດ້ປົດ" ພະຣາຊິນີ Liliuokalani ຂອງປະເທດຮາວາຍອອກ (ຈົ່ງອ່ານການປະທ້ວງ ຂອງພະຣາຊິນີ ທີ່ເວັບໄຊ໌ http://www.kanakamaolipower.org/history.php).

**1898 –** ສະຫະລັດ ໄດ້ເຂົ້າໄປຄອບຄອງເອົາຮາວາຍໃຫ້ເປັນດິນຂອງສະຫະລັດ "ຢ່າງເປັນທາງການ" ໂດຍບໍ່ໄດ້ຜ່ານພິທີທາງການ ເຊັ່ນສົນທິສັນຍາເຂົ້າໄປຄວບຄຸມເອົາເຂດດັ່ງກາວ, ຊຶ່ງສະ ຫະລັດລ້ວນແຕ່ໄດ້ເຮັດດັ່ງນັ້ນ ໃນເມື່ອກ່ອນ ໃນເວລາທີ່ໄດ້ໄປຄອບຄອງເອົາ Louisiana, Florida, Texas, ແລະຜືນແຜ່ນດິນອື່ນໆ ໃຫ້ເຂົ້າເປັນຂອງສະຫະລັດ. ອີງຕາມກົດໝາຍສາກົນແລ້ວ ການທີ່ບໍ່ມີສົນທິສັນຍາເຂົ້າໄປຄວບຄຸມເອົານັ້ນ ໝາຍຄວາມວ່າ ອີທິປະໄຕຂອງປະເທດທີ່ຖືກຄອບຄອງເອົານັ້ນ ຍັງ**ບໍ່**ທັນໄດ້ຍອມຈຳນົນ.

**1959 –** ສະຫະລັດໄດ້ຈັດຕັ້ງການລົງຄະແນນສຽງໂດຍຖາມຊາວຮາວາຍທຸກຄົນວ່າ ພວກເຂົາເຈົ້າຢາກຈະຮັກສາສະຖານະພາບທີ່ເປັນປະເທດຢູ່ໃນອາລັກຂາຂອງສະຫະລັດຄືເກົ່າຢູ່ບໍ່ ຫລືຢາກຈະເຂົ້າມາເປັນລັດນຶ່ງຂອງສະຫະລັດ. ເພື່ອໃຫ້ມີຜົນລົງຄະແນນສຽງທີ່ໄດ້ປຽບທາງຜົນປະໂຫຍດແກ່ຕົນ, ສະຫະລັດບໍ່ໄດ້ຖາມຄຳຖາມທີ່ສາມ ທີ່ໄດ້ກຳນົດໄວ້ໃນສົນທິສັນຍາພື້ນຖານດ້ານຄວາມໝັ້ນຄົງຂອງສະຫະປະຊາຊາດ (Charter of the United Nations) ນັ້ນວ່າ ຊາວຮາວາຍຢາກຈະມີເອກະລາດຫລືບໍ່. ໂດຍໄດ້ຮັບການຊ່ວຍໃຫ້ມີຄະແນນສຽງເພີ້ມຂຶ້ນ ຈາກທະຫານອາເມຣິກັນຈຳນວນ 10,000 ຄົນ ທີ່ປະຈຳຢູ່ຮາວາຍໃນເວລານັ້ນ, ສະຫະລັດໄດ້ຮັບຄະແນນສຽງສ່ວນຫລາຍວ່າ ຢາກເຂົ້າໄປເປັນສະຫະລັດ ແລະພວກເຂົາເຈົ້າກໍເອົາຮາວາຍລວມເຂົ້າເປັນ ລັດທີ 50 ຂອງສະຫະລັດ.

**ມື້ນີ້ –** ຮາວາຍຍັງເປັນຫົວເມືອງຂຶ້ນທີ່ງາມທີ່ສຸດຂອງຈັກກະພັດອາເມຣິກາ, ແລະສະຫະລັດ ຍັງ ປ້ອງກັນບໍ່ໃຫ້ຊາວຮາວາຍ ທີ່ຢາກຊອກຫາຊ່ອງທາງຍາດເອົາເອກະລາດນັ້ນ. ແຕ່ວ່າຈະເຮັດແນວນັ້ນໄດ້ດົນປານໃດ...?

**ຄົນອາເມຣິກັນ ເວົ້າເຕືອນສະຕິຕົນຢູ່ທຸກມື້ວ່າ:** *"ພວກເຮົາເປັນປະເທດທີ່ດີເລີດໃນຜືນແຜ່ນດິນຂອງໂລກນີ້!"*
ແລະພ້ອມກັນນັ້ນ ພວກເຂົາຍັງສອນເດັກນ້ອຍໃນໂຮງຮຽນອີກ ໃຫ້ພາກັນປະຕິຍານຄວາມຈົງຮັກພັກດີວ່າ: "***...ໃຫ້ອິດສະລະພາບ ແລະຄວາມຍຸດຕິທຳແກ່ພົດທຸກຄົນ!"***
ພວກຊາວຮາວາຍຕອບວ່າ: ***ຮາວາຍບໍ່ແມ່ນປະເທດອາເມຣິກາ, ແລະຈະບໍ່ເປັນອາເມຣິກາຈັກເທື່ອ!***

*ສະຫະລັດຈະໄປກ່ຽວຂ້ອງຫຍັງກັບປະເທດອື່ນ ທີ່ຊອກຫາຊ່ອງທາງຍາດເອົາເອກະລາດຂອງຕົນ? ມີຫລາຍອັນຄ້າຍຄືກັນຢູ່. ຍັງມີສອງສາມປະເທດທີ່ຖືກຄອບຄອງໂດຍປະເທດອື່ນ ຢູ່ໃນໂລກນີ້ ທີ່ພົບຄວາມຫຍຸ້ງຍາກໃນການຍາດເອົາເອກະລາດຂອງຕົນ. ພວກເຂົາມີເລື້ອງທີ່ຈະສະ ແດງໃຫ້ຄົນເຫັນເຖິງວິທີການໃຊ້ກຳລັງໄປຄອບຄອງປະເທດອື່ນ ໂດຍຕ່າວປີ້ນ ຫລືເມີນເສີຍຕໍ່ກົດໝາຍສາກົນຄືແນວໃດ ເພື່ອຈະໄດ້ຍົກເລີກກົດໝາຍນັ້ນ. ຄົນເຊື້ອຊາດຮາວາຍຢາກຈະເຮັດຫໍວາງສະແດງທາງດ້ານການສຶກສາທີ່ຖາວອນ ຢູ່ເກາະຄວາຍ (Kauai) ຊຶ່ງເປັນເກາະທີ່ຫົວແຂງ ແລະກໍຢາກເອົາເລື້ອງແລະທຸງຊາດຂອງພວກເຂົາເຈົ້າມາວາງສະແດງໄວ້ ເພື່ອຈະໄດ້ໃຫ້ການສຶກສາແກ່ນັກທ່ອງທ່ຽວມາຈາກທຸກຊີກໂລກໃຫ້ຮູ້ຈັກເລື້ອງນີ້. ແນ່ນອນ, ເອກະສານນີ້ຈະມີໃຫ້ອ່ານຢູ່ທາງອິນເຕີແນັດ ແລະຈະຖືກແປໃຫ້ເປັນຫລາຍໆ ພາສາອີກ.*